ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 39 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 28 ກັນຍາ 2018

ສຳນັກງານ ຄຄຊ
ເລກທີ 1048
ວັນທີ 09 OCT 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 03-07/09/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,27% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກດັດຊະນີຂະແໜງການຜະລິດຂອງສະຫາລັດອາເມລິກາ ໃນເດືອນ 8/2018 ເພີ່ມຂຶ້ນ ຢູ່ທີ່ລະດັບ 61,3 ຈຸດ ຈາກລະດັບ 58,1 ຈຸດ ໃນເດືອນຜ່ານມາ ແລະ ຕົວເລກການຈ້າງງານບໍ່ລວມຂະແໜງ ການກະສິກຳ ໃນເດືອນ 08/2018 ເພີ່ມຂຶ້ນ 201.000 ຄົນ ຈາກ 147.000 ຄົນ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 27-31/08/2018 | ອາທິດນີ້ 03-07/09/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1672 | 1,1640 | 0,27% |
| ເຢນ/ໂດລາ | 110,83 | 110,75 | 0,07% |
| ບາດ/ໂດລາ | 32,720 | 32,790 | -0,21% |
| ເປໂຊ/ໂດລາ | 53,51 | 53,85 | -0,64% |
| ຣູເປັຍ/ໂດລາ | 14.735,00 | 14.825,00 | -0,61% |
| ໂດລາສິງກະໂປ/ໂດລາ | 1,3696 | 1,3748 | -0,38% |
| ຢວນ/ໂດລາ | 6,8360 | 6,8431 | -0,10% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 2,88% ເປັນ 68,01 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສ. ອາເມລິກາ ເພີ່ມຂຶ້ນ 1,84 ລ້ານບາເຣວ ໃນອາທິດທີ 31/08/2018 ຈາກຫຼຸດລົງ 1,55 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳ ຫຼຸດລົງ 0,53% ເປັນ 1.200,70 ໂດລາ/ອອນ ເນື່ອງຈາກເງິນໂດລາແຂງຄ່າ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,08% ແລະ ອ່ອນຄ່າລົງ 0,02% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,84% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,11% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 31/08/2018 | | | ອາທິດນີ້ 07/09/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.624,56 | 8.652,50 | 8.637,05 | 8.629,19 | 8.655,76 | 8.644,35 | -0,05% | -0,04% | -0,08% | -3,80% | -3,80% | -3,84% |
| ບາດ | 266,07 | 267,78 | 267,07 | 266,39 | 267,66 | 267,13 | -0,12% | 0,05% | -0,02% | -4,26% | -4,07% | -4,11% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,48% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 6,19%;
- ປະລິມານເງິນ M2 ຫຼຸດລົງ 0,55% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,29%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (31/08-06/09/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 3,94 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 25,76 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 29,70 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 185,25 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 193,03 ລ້ານບາດ ແລະ ຂາຍເງິນບາດໄດ້ 378,28 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 30,21% ແຕ່ເງິນບາດ ເພີ່ມຂຶ້ນ 2,13%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 4,75 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 72,40 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,55 ລ້ານໂດລາ ແລະ ເງິນບາດ ຈຳນວນ 19 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 24-30/08/2018 | | ອາທິດນີ້ 31/08-06/09/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **39,15** | **209,16** | **25,76** | **193,03** | **-34,20%** | **-7,71%** |
| - ທ/ຄທຸລະກິດລັດ | 8,40 | 81,51 | 14,83 | 50,36 | 76,55% | -38,22% |
| - ທ/ຄທຸລະກິດອື່ນໆ | 30,75 | 127,65 | 10,93 | 142,67 | -64,46% | 11,77% |
| 2. ການຂາຍເງິນຕາຕ່າງປະເທດ | **40,32** | **350,24** | **29,70** | **378,28** | **-26,34%** | **8,01%** |
| - ທ/ຄທຸລະກິດລັດ | 9,61 | 126,94 | 13,38 | 102,23 | 39,23% | -19,47% |
| - ທ/ຄທຸລະກິດອື່ນໆ | 30,71 | 223,30 | 16,32 | 276,05 | -46,86% | 23,62% |
| ຊື້-ຂາຍສຸດທິ ທທກ | **-1,17** | **-141,08** | **-3,94** | **-185,25** | **236,75%** | **31,31%** |
| - ຜິດດ່ຽງຊື້-ຂາຍ | -2,99% | -67,45% | -15,30% | -95,97% | 411,54% | 42,28% |
| - ມູນຄ່າການຊື້-ຂາຍ | **79,47** | **559,40** | **55,46** | **571,31** | **-30,21%** | **2,13%** |
| 3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | **-10,59** | **-161,90** | -4,75 | -72,40 | | |
| - ທຫລ ຊື້ຈາກ ທທກ | 0,05 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 10,64 | 161,90 | 4,75 | 72,40 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **3,42** | **19,60** | **0,55** | **19,00** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 09/2018 ຄາດວ່າຈະຢູ່ໃນລະດັບ 2,80% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 154,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 32,28 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 65,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 26,58 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 588 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 264 ສະບັບ ເທົ່າກັບ 30,99% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 344,63 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 22,25 ຕື້ກີບ ເທົ່າກັບ 6,06%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (31/08-06/09/2018) ມີທັງໝົດ 3.973 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- ສະກຸນເງິນກີບ: ມີການເຄື່ອນໄຫວຈຳນວນ 3.844 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 301 ຕື້ກີບ ຈາກ 669,48 ຕື້ກີບ ມາເປັນ 970,40 ຕື້ກີບ ເທົ່າກັບ 44,96%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 129 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 167,59 ຕື້ກີບ ຈາກ 10,53 ຕື້ກີບ ມາເປັນ 178,12 ຕື້ກີບ ເທົ່າກັບ 1.592,52%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 882,45 ຈຸດ ເພີ່ມຂຶ້ນ ຈາກ 876,95 ຈຸດ ຫຼື ເທົ່າກັບ 0,63% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 336.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,76 ຕື້ກີບ ເພີ່ມຂຶ້ນ 332,86% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 71,29% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ EDL-Gen. ສ່ວນສາເຫດການເພີ່ມຂຶ້ນຂອງມູນຄ່າການຊື້-ຂາຍ ແມ່ນມາຈາກຮຸ້ນຂອງ BCEL ມີການຊື້-ຂາຍ ທີ່ເພີ່ມຂຶ້ນເຖິງ 397,07% ເນື່ອງຈາກອາທິດນີ້ BCEL ເປີດເຜີຍຂ່າວ ກ່ຽວກັບພິທີເຊັນສັນຍາວ່າດ້ວຍການເປັນຕົວແທນຮັບຊໍາລະຄ່າທໍານຽມທາງ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານສົ່ງເສີມກະສິກໍາ.

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈໍານວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (ກີບ) | ລາຄາ ປ່ຽນແປງ (%) |
| BCEL | 49.300 | 280.990.000 | 5.700 | **249.200** | **1.396.705.000** | **5.600** | 405,48 | 397,07 | -1,75 | 49.300 |
| EDL-GEN | 29.200 | 123.390.000 | 4.250 | **83.500** | **358.635.000** | **4.300** | 185,96 | 190,65 | 1,18 | 29.200 |
| LWPC | - | - | 8.300 | - | - | **8.300** | - | - | - | - |
| PTL | - | - | 1.600 | - | - | **1.600** | - | - | - | - |
| SVN | 1.200 | 2.040.000 | 1.700 | - | - | **1.700** | -100,00 | -100,00 | - | 1.200 |
| PCD | 100 | 120.000 | 1.200 | - | - | **1.200** | -100,00 | -100,00 | - | 100 |
| LCC | 300 | 630.000 | 2.100 | **3.400** | **7.140.000** | **2.100** | 1.033,33 | 1.033,33 | - | 300 |
| ທັງໝົດ | 80.100 | 407.170.000 | - | **336.100** | **1.762.480.000** | - | 319,60 | 332,86 | | 80.100 |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ສໍາເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມ ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ປະຈໍາເດືອນ ກັນຍາ 2018, ❷ ກອງປະຊຸມປຶກສາຫາລືກ່ຽວກັບການກໍານົດລາຄາສະເພາະຂອງຕະຫຼາດຫຼັກຊັບລາວ (Special Quotation), ❸ ກອງປະຊຸມຄະນະອະນຸກໍາມະການ ແລະ ຄະນະຮັບຜິດຊອບ ເພື່ອປຶກສາຫາລືກ່ຽວກັບຄໍາເຫັນຂອງກອງປະຊຸມລັດຖະບານຕໍ່ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ), ❹ ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານ ທຫລ, ❺ ກອງປະຊຸມປຶກສາຫາລື ວຽກງານວາງສະແດງ ກະກຽມສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ, ❻ ພິທີມອບ-ຮັບໜ້າທີ່ ລະຫວ່າງ ເລຂາຄະນະພັກ-ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຜູ້ເກົ່າ ແລະ ຜູ້ໃໝ່ ແລະ ❼ ພິທີຖະແຫຼງຂ່າວການກະກຽມສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ;

- ຄະນະຜູ້ວ່າການ ທຫລ ສືບຕໍ່ຮຽນບໍາລຸງທິດສະດີການເມືອງ ຢູ່ ສປ ຈີນ;

- ສະພາແຫ່ງຊາດ ເຊັນຮັບຮອງຕໍ່ຮ່າງກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018.

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງໃກ້ຊິດ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມການນໍາລະດັບສູງທະນາຄານກາງໃນພູມມິພາກເອເຊຍຕາເວັນອອກສຽງໃຕ້-ທະນາຄານເພື່ອການຊໍາລະໜີ້ລະຫວ່າງປະເທດ (SEACEN-BIS)ແລະ ກອງປະຊຸມປະຈໍາປີ ຄະນະ ACEN-XCO ຄັ້ງທີ 17, ❷ ກອງປະຊຸມປຶກສາຫາລືກ່ຽວກັບແຜນເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປີ 2019, ❸ ກອງປະຊຸມປຶກສາຫາລືຕໍ່ກັບເນື້ອໃນຮ່າງຂໍ້ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ, ❹ ກອງປະຊຸມປຶກສາຫາລືກ່ຽວກັບຂໍ້ມູນສິນເຊື່ອຮ່ວມກັບບັນດາກະຊວງທີ່ກ່ຽວຂ້ອງ, ❺ ກອງປະຊຸມຄະນະກໍາມະການຄຸ້ມຄອງຫຼັກຊັບ ຄັ້ງທີ II ປະຈໍາປີ 2018 ແລະ ❻ ພິທີການຈັດຕັ້ງເຊື່ອມຊຶມເຜີຍແຜ່ເອກະສານສໍາຄັນຕ່າງໆຂອງຊາດຂອງພັກ;

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍານັບ ຄະນະຜູ້ວ່າການ ທຫລ ຈາກຜູ້ຮັບຜິດຊອບອົງການ ກອງທຶນການພັດທະນາທຶນຂອງສະຫະປະຊາຊາດ (UNCDF).

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ